# Agriculture Economics
## Week 16- Final Exam Answer Sheet

## ຂະໜານຕອບບົດສອບເສັງທ້າຍພາກ
## Final Exam

**1. ຈົ່ງບອກຄວາມໝາຍ ແລະ ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ?**

<u>ຕອບ:</u> ຕະຫຼາດຊື້ຂາຍລ່ວງໜ້າໝາຍເຖິງຕະຫຼາດທີ່ຜູ້ຊື້ ແລະ ຜູ້ຂາຍເຮັດຂໍ້ຕົກລົງຊື້ຂາຍສັນຍາຊື້ຂາຍລ່ວງໜ້າ (Futures Contract) ໂດຍທີ່ຜູ້ຕ້ອງການຊື້ຂາຍອາດຈະສັນຍາຊື້ຂາຍລ່ວງໜ້າໃໝ່ ຫຼື ຊື້ຂາຍລ່ວງໜ້າທີ່ມີຢູ່ແລ້ວໃນຕະຫຼາດຊື້ຂາຍລ່ວງໜ້າ ເຊິ່ງໃນສັນຍາຈະລະບຸຊະນິດ ແລະ ປະເພດຂອງສິນຄ້າ, ຄຸນນະພາບ, ລາຄາ, ເວລາ ແລະ ສະຖານທີ່ມອບສິ່ງຊັດເຈນ.

ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ

(1) ອຳນວຍຄວາມສະດວກດ້ານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆແກ່ຜູ້ທີ່ສົນໃຈ ຕໍ່ການຊື້ຂາຍໃບສັນຍາໃນຕະຫຼາດເຂົ້າມາ

(2) ກຳນົດກົດເກນ ແລະ ຫຼັກປະກັນຕ່າງໆກ່ຽວກັບການຊື້ຂາຍສິນຄ້າກະເສດລ່ວງໜ້າ ໄດ້ແກ່ການເຮັດສັນຍາຊື້ຂາຍ ການຊຳລະຄ່າສິນຄ້າ ການວາງເງິນປະກັນ ແລະ ການກຳນົດອັດຕາການຂຶ້ນລົງຂອງເງິນປະກັນ ການກຳນົດສະຖານທີ່ຊື້ຂາຍໃນແຕ່ລະມື້ ແລະ ການກຳນົດປະລິມານຊື້ຂາຍສູດທິຂອງສະມາຊິກ

(3) ກຳນົດແນວທາງການດຳເນີນງານຕໍ່ຜູ້ທີ່ບໍ່ປະຕິບັດຕາມສັນຍາ ມີລະບົບຄວບຄຸມ ແລະ ປ້ອງກັນ ການໃນຕະຫຼາດ ກວດສອບບັນຊີຊື້ຂາຍຂອງສະມາຊິກຕະຫຼາດ ມີອຳນາດສັ່ງລະງັບ ຫລື ຢຸດການຊື້ຂາຍ ກຳນົດ ຂັ້ນຕອນການລົງໂທດສະມາຊິກ ແລະ ບົດລົງໂທດທາງອາຍາ ເຮັດຫນ້າທີ່ເປັນອາຍາໃຫຍ່ຕຸລາການໄກ່ເກ່ຍກໍລະນີຜິດພາດທີ່ເກີດຂຶ້ນລະຫວ່າງສະມາຊິກນຳກັນ ຫຼື ສະມາຊິກກັບລູກຄ້າ

(4) ໃຫ້ບໍລິການຂໍ້ມູນກ່ຽວກັບສິນຄ້າກະເສດ ໂດຍເກັບລວບລວມຂໍ້ມູນ ແລະ ເຜີຍແຜ່ຄວາມຮູ້ຄວາມເຂົ້າໃຈກ່ຽວກັບຕະຫຼາດສິນຄ້າກະເສດລ່ວງໜ້າ ລວມທັງປັດໄຈຕ່າງໆ ທີ່ອາດມີຜົນກະທົບຕໍ່ຕະຫຼາດ ແລະ ຈັດອົບຮົມປະຊາສຳພັນກ່ຽວກັບການບໍລິຫານຕະຫຼາດແລະການດຳເນີນງານຂອງຕລາດສິນຄ້າກະເສດລ່ວງໜ້າ

**2. ການຜະລິດສິນຄ້າກະສິກຳມີລັກສະນະສຳຄັນແຕກຕ່າງຈາກການຜະລິດສິນຄ້າອຸດສາຫະກຳ?**

**<u>ຕອບ:</u>**

-ການຜະລິດໃນສາຂາກະສິກຳຂຶ້ນຢູ່ກັບສະພາບດິນຟ້າອາກາດ ແລະ ທຳມະຊາດ ແລະ ບໍ່ສາມາດຄວບຄຸມໄດ້ ແຕ່ການຜະລິດໃນສາຂາອຸດສາຫະກຳຂຶ້ນຢູ່ກັບສະພາບດິນຟ້າອາກາດນ້ອຍຫຼາຍ

-ການຈັດການ ຫຼື ການວາງແຜນການຜະລິດສິນຄ້າກະສິກຳເຮັດໄດ້ຍາກ ເພາະຂຶ້ນຢູ່ກັບລະດູການໂດຍສະເພາະການຜະລິດພືດ  ຜັກ ຜະລິດໄມ້ການຜະລິດກໍ່ຈະຜະລິດໄປຕາມລະດູການ ເຖິງໃນປັດຈຸບັນຈະສາມາດຜະລິດໄດ້ນອກລະດູການກໍ່ຕາມ ແຕ່ການຈັດການ ຫຼື ການວາງແຜນການຜະລິດຄ່ອນຂ້າງຈະຍຸ້ງຍາກ ແລະ ເສຍຄ່າໃຊ້ຈ່າຍສູງ.

-ສິນຄ້າກະສິກຳມີລັກຊະນະເໜົ່າເສຍງ່າຍ, ເສື່ອມຄຸນນະພາບໄດ້ງ່າຍ ໃນຂະນະທີ່ສິນຄ້າອຸດສາຫະກຳຈະເກັບໄດ້ດົນກວ່າ.

-ການປະກອບການມີລັກສະນະເປັນທຸລະກິດພາຍໃນຄອບຄົວ ຊຶ່ງມີຂະໜາດນ້ອຍ ແລະ ໃຊ້ແຮງງານໃນຄອບຄົວ.

**3. ຕົ້ນທຶນໃນການຜະລິດສິນຄ້າກະເສດໝາຍເຖິງຫຍັງ? ປະກອບຈັກປະເພດ? ຈົ່ງອະທິບາຍ ແລະ ຍົກຕົວຢ່າງ?**

**<u>ຕອບ:</u>**

ໃນການຜະລິດສິນຄ້າກະສິກຳຊຶ່ງຕ້ອງໃຊ້ປັດໄຈຕ່າງໆເຂົ້າໃນການຜະລິດ ເຮັດໃຫ້ມີຄ່າໃຊ້ຈ່າຍໃນການໃຊ້ປັດໄຈ ຫຼື ເອີ້ນວ່າຕົ້ນທຶນການຜະລິດ .

- ຕົ້ນທຶນການຜະລິດສິນຄ້າກະເສດປະເພດຕ່າງໆປະກອບມີ

-ຕົ້ນທຶນທີ່ເປັນເງິນສົດ (cash cost): ເປັນຄ່າໃຊ້ຈ່າຍເພື່ອຊື້ ຫຼື ເຊົ່າປັດໄຈການຜະລິດ ເຊັ່ນ: ຄ່າເຊົ່າທີ່ດິນ, ຄ່າຈ້າງແຮງງານ, ຊື້ປຸ໋ຍ, ຢາຂ້າແມງໄມ້, ພັນ ເປັນຕົ້ນ

-ຕົ້ນທຶນທີ່ບໍ່ເປັນເງິນສົດ ຫຼື ຕົ້ນທຶນປະເມີນ(non-cash cost): ເປັນຕົ້ນທຶນທີ່ຕ້ອງປະເມີນໃຫ້ໃນການໃຊ້ປັດໄຈການຜະລິດທີ່ກະສິກອນມີຢູ່ເອງ: ການນຳທີ່ດິນຂອງຕົນເອງມາເຮັດການກະເສດເຖິງບໍ່ໄດ້ຈ່າຍເປັນເງິນສົດແຕ່ຕ້ອງຄິດເປັນຕົ້ນທຶນໃຫ້ເພາະທີ່ດິນມີຄ່າເສຍໂອກາດ

-ຕົ້ນທຶນຄົງທີ່(fixed costs): ເປັນຕົ້ນທຶນທີ່ບໍ່ປ່ຽນແປງຕາມປະລິມານຜົນຜະລິດ ເຊັ່ນ: ທີ່ດິນ, ສິ່ງປຸກສ້າງ, ເຄື່ອງມື/ເຄື່ອງຈັກ, ລະບົບຊົນລະປະທານຄ່າຫຼູ້ຍຫ້ຽນ, ຄ່າປະກັນໄພຖາວອນ, ເງິນເດືອນພະນັກງານປະຈຳ, ຄ່າໃຊ້ຈ່າຍບໍລິຫານປະຈຳ

-ຕົ້ນທຶນປ່ຽນແປງ(variable costs): ເປັນຕົ້ນທຶນທີ່ເກີດຈາກການໃຊ້ປັດໄຈປ່ຽນແປງ ແລະ ຈະປ່ຽນແປງໄປຕາມປະລິມານຜົນຜະລິດ ເຊັ່ນ: ແຮງງານ, ປັດໄຈການຜະລິດ, ພະລັງງານ, ການບຳລຸງຮັກສາ, ການຂົນສົ່ງ, ການຕະຫຼາດ, ຄ່າໃຊ້ຈ່າຍອື່ນໆ.

**4. ຈົ່ງບອກຄວາມໝາຍຂອງການຕະຫຼາດ ໝາຍເຖິງຫຍັງ?ພ້ອມທັງບອກຂັ້ນຕອນຂອງກິດຈະກຳທາງການຕະຫຼາດຂອງສິນຄ້າກະສິກຳມີຂັ້ນຕອນໃດແດ່?**

**<u>ຕອບ:</u>** ການຕະຫລາດໝາຍເຖິງກິດຈະກຳທາງເສດຖະກິດ ທີ່ເຮັດໃຫ້ສິນຄ້າ ແລະ ບໍລິການມີການເຄື່ອນຍ້າຍຈາກແຫລ່ງຜູ້ຜະລິດໄປຫາຜູ້ບໍລິໂພກຄົນສຸດທ້າຍ. ກ່ອນສິນຄ້າ ແລະ ບໍລິການຈະເຄື່ອນຍ້າຍຈາກແຫລ່ງຜະລິດ ຫາຜູ້ບໍລິໂພກໄດ້ ຕ້ອງໄດ້ຜ່ານຂະບວນການແລກປ່ຽນ-ຊື້ຂາຍຫຼາຍມື, ຫຼາຍຂັ້ນຕອນຊຶ່ງເອີ້ນວ່າ ກິດຈະກຳທາງເສດຖະກິດ. ການຕະຫລາດຂອງສິນຄ້າກະສິກຳແມ່ນກິດຈະກຳຕ່າງໆຂອງທຸລະກິດທີ່ເຮັດໃຫ້ຜົນຜະລິດກະສິກຳເຄື່ອນຍ້າຍຈາກມືຂອງຊາວກະສິກອນຈົນໄປເຖິງຜູ້ບໍລິໂພກຄົນສຸດທ້າຍໃນລັກສະນະຂອງສິນຄ້າທີ່ຜູ້ບໍລິໂພກຕ້ອງການໃນເວລາ ແລະ ສະຖານທີ່ທີ່ຕ້ອງການ ລວມໄປເຖິງລາຄາທີ່ຜູ້ບໍລິໂພກຍິນດີທີ່ຈະຈ່າຍເພື່ອຊື້ສິນຄ້ານັ້ນໆ

ຂັ້ນຕອນຂອງກິດຈະກຳທາງການຕະຫຼາດຂອງສິນຄ້າກະສິກຳມີ 6 ຂັ້ນຕອນຄື: ການຜະລິດ, ການລວບລວມ, ການແປຮູບ, ການຂາຍສົ່ງ, ການຂາຍຍ່ອຍ, ການບໍລິໂພກ ເຊິ່ງການເຮັດກິດຈະກຳທາງການຕະຫຼາດ

ຫຼື ໜ້າທີ່ການຕະຫຼາດທີ່ສຳຄັນຈຶ່ງເປັນການປັບປຸງສິນຄ້າໃຫ້ກົງກັບຄວາມຕ້ອງການຂອງຜູ້ບໍລິໂພກ ການປັບປຸງນີ້ເປັນການເພີ່ມມູນຄ່າເພີ່ມ ຫຼື ອັດຖະປະໂຫຍດ ໃຫ້ກັບສິນຄ້າ ເຊິ່ງເຮັດໃຫ້ຜູ້ບໍລິໂພກໄດ້ຮັບຄວາມພໍໃຈຫຼາຍຂຶ້ນ

**5. ການສ້າງມູນຄ່າເພີ່ມແມ່ນຫຍັງ? ຈົ່ງອະທິບາຍ 4 ແນວທາງໃນການຂະຫຍາຍທຸລະກິດ ANSOFF'S MATRIX**

**<u>ຕອບ:</u>** ມູນຄ່າເພີ່ມແມ່ນການເຮັດໃຫ້ຜະລິດຕະພັນມີມູນຄ່າ ຫຼື ລາຄາສູງຂຶ້ນກວ່າປົກກະຕິໂດຍເປັນຜົນມາຈາກປັດໄຈອື່ນໆທີ່ຜູ້ຜະລິດພະຍາຍາມນຳເຂົ້າໃສ່ໃນການຜະລິດເພື່ອໃຫ້ຖືກໃຈລູກຄ້າ. ການສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນກະເສດໝາຍເຖິງການປຸງແຕ່ງຜະລິດຕະພັນກະເສດຫຼືພັດທະນາຕໍ່ໄປຈາກລັກສະນະດັ້ງເດີມ.

**4 ແນວທາງໃນການຂະຫຍາຍທຸລະກິດ ANSOFF'S MATRIX**

- ກົນລະຍຸດເຈາະຕະຫຼາດ ຜະລິດຕະພັນເດີມ x ຕະຫຼາດເດີມ (Market penetration): ສິນຄ້າເດີມ, ການບໍລິການເດີມ ກັບລູກຄ້າປັດຈຸບັນເພື່ອດຶງດູດໃຫ້ລູກຄ້າກຸ່ມເດີມຊື້ສິນຄ້າ ແລະ ໃຊ້ບໍລິການຫຼາຍຂຶ້ນ. ໂດຍໃຊ້ເທັກນິກທາງການຕະຫຼາດ
- ກົນລະຍຸດພັດທະນາຜະລິດຕະພັນ: ຜະລິດຕະພັນໃໝ່ x ຕະຫຼາດເດີມ (Product development): ການສ້າງສິນຄ້າໃໝ່, ການບໍລິການໃໝ່ ກັບລູກຄ້າເດີມມີທາງເລືອກຫຼາຍຂຶ້ນບໍ່ວ່າຈະເປັນການເພີ່ມປະເພດ ຫຼື ພັດທະນາສິນຄ້າລຸ້ນໃໝ່ທີ່ລູກຄ້າມັກ ແລະ ຕ້ອງການ.
- ກົນລະຍຸດຂະຫຍາຍຕະຫຼາດ: ຜະລິດຕະພັນເດີມ x ຕະຫຼາດໃໝ່ (Market Development): ການເພີ່ມຍອດຂາຍຈາກການນຳສິນຄ້າ ຫຼື ບໍລິການເດີມໄປວາງຂາຍໃນຕະຫຼາດໃໝ່ທີ່ມີສັກກະຍາພາບຜ່ານການນຳສະເໜີເຖິງຮູບແບບ ແລະ ຄຸນປະໂຫຍດຂອງຜະລິດຕະພັນໃຫ້ກຸ່ມລູກຄ້າຕະຫຼາດໃໝ່ ໂດຍບໍ່ໄດ້ພັດທະນາ ຫຼື ສ້າງສັນຜະລິດຕະພັນໃຫມ່ແຕ່ຢ່າງໃດ ເຊັ່ນ: ການກຸ່ມລູກຄ້າປົກແບບ B2C ຫຼື B2B.
- ກົນລະຍຸດສ້າງທຸລະກິດໃໝ່: ຜະລິດຕະພັນໃໝ່ x ຕະຫຼາດໃໝ່ (Diversification): ການພັດທະນາສິນຄ້າໃໝ່ ຜະລິດຕະພັນໃໝ່ ເຊິ່ງສາມາດເປັນໄດ້ທັງການຂາຍສິນຄ້າ ຫຼື ການບໍລິການທີ່ກ່ຽວກັບ ຕ່ອງໂສ້ອຸປະທານ Supply Chain ເຊັ່ນ ທຸລະກິດ ອາຫານຂະຫຍາຍວັດຖຸດິບສຳລັບເຮັດອາຫານໃຫ້ກັບຮ້ານອາຫານປະເພດດຽວກັນເປັນຕົ້ນ ຫຼື ທຸລະກິດຮ້ານອາຫານທີ່ຂະຫຍາຍໄປສູ່ທຸລະກິດໂຮງແຮມ.